ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222, 451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222, 451116 FAX: 451117

E-mail:Lcc@laocement.com,www.laocement.com

ເລກທີ 114 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 28 MAR 2024

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1 ປີ 2024

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປີ 2024 ເຊິ່ງຈັດຂຶ້ນໃນວັນທີ 28 ມີນາ 2024 ເວລາ 9:00 ໂມງ, ຢູ່ສຳນັກງານບໍລິສັດ ຊີມັງລາວ ມະຫາຊົນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ເຫັນດີໃຫ້ມີການຮຽກປະຊຸມຜູ້ຖືຮຸ້ນ ໃນວັນທີ 30 ເມສາ 2024, ເວລາ 9:00 ໂມງ, ສະຖານທີ່ຫ້ອງ ປະຊຸມຊັ້ນ 4 : ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະບໍລິການຂາເຂົ້າ-ຂາອອກ (ພກອ) ໂດຍມີວາລະເພື່ອພິຈາລະນາດັ່ງຕໍ່ໄປນີ້ :
   1) ພິຈາລະນາແລະຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022
   2) ພິຈາລະນາ ແລະ ຮັບຮອງ ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2023.ແລະແຜນດຳເນີນ ທຸລະກິດປະຈຳປີ 2024 ຂອງ ບໍລິສັດ ຊີມັງລາວ ມະຫາຊົນ
   3) ພິຈາລະນາ ແລະ ຮັບຮອງ ເອກະສານລາຍງານການເງິນ ຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະ ຈຳປີ 2023.
   4) ພິຈາລະນາ ແລະຮັບຮອງ ກ່ຽວກັບສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດຣີສອດສາກົນ ໜອງສີຟ້າດວງຈັນວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ)
   5) ພິຈາລະນາ ແລະ ຮັບຮອງ ກ່ຽວກັບສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງເຂດສາທິດເສດ ຖະ ກິດ ອຸດສາຫະກຳ ການທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ

6) ພິຈາລະນາ ແລະຮັບຮອງ ກ່ຽວກັບກິດລະບຽບ ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

7) ພິຈາລະນາ ແລະຮັບຮອງ ກ່ຽວກັບການຂຶ້ນທະບຽນບັນດາບໍລິສັດລູກ

8) ພິຈາລະນາ ແລະຮັບຮອງ ກ່ຽວກັບການຮ່ວມທຶນເຂົ້າສູນຜະລິດຮູບເງົາ-ໂທລະພາບລາວ

9) ພິຈາລະນາ ແລະຮັບຮອງ ກ່ຽວກັບການປ່ຽນແປງຂອງຜູ້ບໍລິຫານຂັ້ນສູງ

2. ເຫັນດີ : ກຳນົດເອົາວັນທີ 11 ເມສາ 2024 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023.

ກອງປະຊຸມໄດ້ປິດລົງເວລາ 11:30 ໂມງ.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານບໍລິສັດ

ເນ້ຍເຫຼ້ຍ